# ການປ່ຽນແປງຕ່າງໆທີ່ມີໃນ ໂຄງການບັດແລກອາຫານ ທຳໃຫ້ຄົນເຂົ້າເມືອງທີ່ຖືກກົດໝາຍ ມີສິດໄດ້ຮັບຜົນປະໂຫຍດ ມີຈຳນວນເພີ້ມຂື້ນ

## ຂ້າພະເຈົ້າບໍ່ແມ່ນພົນລະເມືອງສະຫະລັດ. ຂ້າພະເຈົ້າສາມາດໄດ້ຮັບບັດແລກອາຫານບໍ?

- ທ່ານອາດມີສິດໄດ້ຮັບ**ໃນຕອນນີ້** ຖ້າທ່ານແມ່ນຜູ້ອາໄສຢູ່ຖາວອນທີ່ຖືກກົດໝາຍ ແລະ ຖ້າວ່າທ່ານ, ສາມີ/ພັນລະຍາຂອງທ່ານ, ຫລື ພໍ່ແມ່ຂອງທ່ານ ມີປະຫວັດການເຮັດວຽກ ຢູ່ສະຫະລັດ(ຫ້ອງການບັດແລກອາຫານຈະສາມາດ ຊ່ວຍຕັດສິນໃຫ້ທ່ານໄດ້ວ່າທ່ານໄດ້ເຮັດວຽກດົນ ພໍຕາມກຳນົດແລ້ວຫລືຍັງ). ຄົນທີ່ເຂົ້າມາໃນສະຫະລັດໃນຖານະ ຜູ້ອົບພະຍົບ ຫລືຄົນເຂົ້າເມືອງບາງປະເພດ ກໍ່ມີສິດໄດ້ຮັບ. ທ່ານຍັງອາດມີສິດໄດ້ຮັບ ຖ້າທ່ານດຳລົງຊີວິດ ຢ່າງຖືກຕ້ອງຕາມກົດໝາຍຢູ່ສະຫະລັດໃນວັນທີ 22 ສິງຫາ ປີ 1996, ***ແລະ*** (1) ທ່ານມີອາຍຸ 65 ປີ ໃນເວລານັ້ນ (ເກີດໃນວັນທີ 22 ສິງຫາ ປີ 1931 ຫລືກ່ອນໜ້ານັ້ນ), ***ຫລື*** (2) ປະຈຸບັນນີ້ ທ່ານໄດ້ຮັບເງິນເສັຍອົງຄະ, ***ຫລື*** (3) ປະຈຸບັນນີ້ ທ່ານມີອາຍຸຕໍ່າກວ່າ 18 ປີ. ທ່ານຍັງອາດມີສິດໄດ້ຮັບ ຖ້າທ່ານຢູ່ໃນສະຫະລັດ ໃນຖານະທີ່ມີເງື່ອນໄຂ ເປັນເວລາ 5 ປີ.

## ໄດ້ມີການປ່ຽນແປງຫຍັງແດ່ແລ້ວ?

- ໃນວັນທີ 13 ພຶດສະພາ ປີ 2002, ປະທານາທິບໍດີ ບຸສ ໄດ້ເຊັນຮັບຮອງເອົາ "ກົດໝາຍວ່າດ້ວຍການປະກັນການກະສິກຳ ແລະ ການລົງທຶນໃນຊົນນະບົດ ສະບັບປີ 2002" (Farm Security and Rural Investment Act of 2002) ຊຶ່ງອະນຸມັດໃຫ້ຄົນເຂົ້າເມືອງ ຊຶ່ງບໍ່ແມ່ນພົນລະເມືອງຂອງສະຫະລັດທີ່ມີລາຍໄດ້ຕໍ່າ ແລະຄົນເຂົ້າເມືອງທີ່ຖືກກົດໝາຍ ຫຼາຍຄົນເພີ້ມຂື້ນ ໄດ້ຮັບບັດແລກອາຫານ ຖ້າພວກເຂົາເຈົ້າມີລາຍໄດ້ແລະຊັບສິນ ຖືກຕ້ອງຕາມ ຂໍ້ກຳນົດຂອງໂຄງການບັດແລກອາຫານ.

## ກົດໝາຍໃໝ່ດັ່ງກ່າວຈະມີຜົນບັງຄັບໃຊ້ເມື່ອໃດ?

- ຄົນເຂົ້າເມືອງທີ່ຖືກກົດໝາຍຈຳນວນນຶ່ງ ທີ່ໄດ້ຮັບຜົນຕາມກົດໝາຍ ປີ 2002 ນີ້ຈະມີສິດໄດ້ຮັບບັດແລກອາຫານໄວ ເລີ້ມແຕ່ວັນທີ 1 ຕຸລາ 2002, ແຕ່ວ່າຄົນສ່ວນໃຫຍ່ຈະຕ້ອງລໍຖ້າລະຍະໜຶ່ງຈົນກວ່າຈະມີສິດໄດ້ຮັບ. ຂໍ້ມູນຕໍ່ລົງໄປນີ້ອະທິບາຍໃຫ້ຮູ້ຕື່ມກ່ຽວກັບສິດທິ ວ່າເລີ້ມຕົ້ນແຕ່ເວລາໃດເປັນຕົ້ນໄປ.

ກົດໝາຍປີ 2002 ໃຫ້ສິດໄດ້ຮັບ ແກ່ຄົນເຂົ້າເມືອງທີ່ຖືກກົດໝາຍ ຜູ້ຊຶ່ງມີຄຸນນະສົມບັດຄົບຖ້ວນຕາມຂໍ້ກຳນົດຂອງໂຄງການ **ແລະ** ຜູ້ທີ່:

- ✔ ພວມໄດ້ຮັບຜົນປະໂຫຍດເນື່ອງຈາກການເສັຍອົງຄະ (ເຊັ່ນວ່າ SSI ຫລື ແມດິເຄດ (Medicaid ທີ່ກ່ຽວເນື່ອງກັບຄວາມພິການ) (ສິດທິໄດ້ຮັບ ສຳລັບກຸ່ມນີ້ ໄດ້ເລີ້ມຕົ້ນແຕ່ວັນທີ **1 ຕຸລາ ປີ 2002**);
- ✔ ໄດ້ດຳລົງຊີວິດຢູ່ ສະຫະລັດ ເປັນເວລາ 5 ປີ ໃນຖານະທີ່ມີຄຸນນະສົມບັດ (ສິດທິໄດ້ຮັບ ສຳລັບກຸ່ມນີ້ ໄດ້ເລີ້ມຕົ້ນແຕ່ວັນທີ **1 ເມສາ ປີ 2003**); ຫລື
- ✔ ມີອາຍຸຕໍ່າກວ່າ 18 ປີ ແລະ ເຂົ້າມາສະຫະລັດ ຫລັງຈາກວັນທີ 22 ສິງຫາ ປີ 1996 (ສິດທິໄດ້ຮັບ ສຳລັບກຸ່ມນີ້ ເລີ້ມຕົ້ນແຕ່ວັນທີ **1 ຕຸລາ ປີ 2003**).

## ຄົນເຂົ້າເມືອງແບບໃດ ມີຖານະທີ່ມີຄຸນນະສົມບັດໄດ້?

- ຄົນເຂົ້າເມືອງຜູ້ມີຖານະ ທີ່ມີຄຸນນະສົມບັດໄດ້ຮວມມີ: ຜູ້ອາໄສຢູ່ແບບຖາວອນ ໂດຍຖືກຕ້ອງ ຕາມກົດໝາຍ (ຜູ້ທີ່ມີບັດຂຽວ), ຜູ້ລີ້ໄພ, ຜູ້ລີ້ໄພການເມືອງ, ຜູ້ຄົນທີ່ໄດ້ຮັບການໂຈະຄຳສັ່ງສົ່ງກັບປະເທດ ຫລືສົ່ງອອກຈາກປະເທດ, ຊາວກູຍບາ/ໄຮຕີ ທີ່ໄດ້ເຂົ້າມາຢູ່, ບຸກຄົນຜູ້ໄດ້ຮັບການອະນຸໂລມຈາກ ຫ້ອງການກຳກັບຄົນເຂົ້າເມືອງ ແລະໂອນສັນຊາດ (Immigration and Naturalization Service - INS) ໃຫ້ຢູ່ໃນສະຫະລັດໄດ້ໂດຍມີເງື່ອນໄຂເປັນເວລາຢ່າງໜ້ອຍນຶ່ງປີ, ຜູ້ທີ່ເຂົ້າມາໃນສະຫະລັດແບບມີເງື່ອນໄຂ, ແລະ ຜູ້ຖືກເຄາະຮ້າຍ ຈາກຄວາມຮຸນແຮງພາຍໃນຄອບຄົວບາງກໍລະນີ.

**ກົດໝາຍດັ່ງກ່າວປ່ຽນແປງລະບຽບການໃຫ້ຄົນເຂົ້າເມືອງຜູ້ທີ່ມີສິດໄດ້ຮັບ ກ່ອນໜ້ານັ້ນ ຫລືບໍ່?**

- ບໍ່. ທຸກຄົນທີ່ເຄີຍມີສິດໄດ້ຮັບກ່ອນໜ້ານັ້ນຈະສືບຕໍ່ໄດ້ຮັບໃນປະຈຸບັນ.

**ກົດໝາຍໄດ້ຕໍ່ເວລາສິດທິໄດ້ຮັບໃຫ້ແກ່ຄົນທີ່ບໍ່ແມ່ນພົນລະເມືອງ ຊຶ່ງດຳລົງຊີວິດຢູ່ໃນປະເທດ ຍ້ອນເຫດຜົນທາງດ້ານມະນຸດສະທັມຫລືບໍ່?**

- ແມ່ນແລ້ວ. ຍ້ອນໝາກຜົນຂອງກົດໝາຍປີ 2002, ຕໍ່ໄປຈະບໍ່ມີຂອບເຂດກຳນົດເວລາ 7 ປີໃນການມີສິດໄດ້ຮັບບັດແລກອາຫານ ສຳລັບຜູ້ອົບພະຍົບ, ຜູ້ລີ້ໄພການເມືອງ, ຄົນອາເມຣິກາ ອາຊີ, ແລະຄົນກຸຍບາ ຫລື ໄຮຕີທີ່ເຂົ້າມາຢູ່ໃນສະຫະລັດ. ເລີ້ມຕົ້ນແຕ່ວັນທີ 1 ເມສາ ປີ 2003, ບຸກຄົນທີ່ບໍ່ແມ່ນພົນລະເມືອງເຫລົ່ານີ້ມີສິດທິ ໄດ້ຮັບດົນຕາບທີ່ເຂົາເຈົ້າມີຄຸນນະສົມບັດ ໃນໂຄງການ ອີງຕາມລາຍໄດ້ ແລະຊັບສິນ.

**ໂຄງການບັດແລກອາຫານ ຈະຕັດສິນໄດ້ບໍ່ວ່າ ຂ້ອຍແມ່ນຄົນເສັຍອົງຄະ?**

- ບໍ່. ທ່ານຕ້ອງແມ່ນຜູ້ທີ່ພວມໄດ້ຮັບຜົນປະໂຫຍດ ຫລື ການຊ່ວຍເຫລືອຈາກໂຄງການໃດນຶ່ງ, ເຊັ່ນ: ແມດິເຄດ (Medicaid), ເນື່ອງຈາກວ່າທ່ານຕາບອດ ຫລື ວ່າເສັຍອົງຄະ.

**ຂ້ອຍສາມາດໄດ້ຮັບຜົນປະໂຫຍດ ສຳລັບລູກໆຂອງຂ້ອຍຊຶ່ງແມ່ນພົນລະເມືອງສະຫະລັດໄດ້ບໍ່ ທັງທີ່ຂ້ອຍເອງ ບໍ່ແມ່ນຄົນເຂົ້າເມືອງທີ່ຖືກກົດໝາຍ?**

- ແມ່ນແລ້ວ. ທ່ານບໍ່ຈຳເປັນຕ້ອງໃຫ້ຂໍ້ມູນເອກະສານກ່ຽວກັບຕົນເອງເວລາທີ່ທ່ານຍື່ນໃບ ສະໝັກໃຫ້ລູກໆຂອງທ່ານ ຫລືບຸກຄົນອື່ນໆໃນຄົວເຮືອນຂອງທ່ານທີ່ມີສິດໄດ້ຮັບ. ແຕ່ວ່າ, ທ່ານກໍ່ຍັງຕ້ອງໄດ້ສະແດງຫລັກຖານລາຍໄດ້ ແລະຊັບສິນຂອງທ່ານ ເພື່ອໃຫ້ພະນັກງານ ສາມາດຕັດສິນໄດ້ວ່າ ຄົນຂອງທ່ານເຫລົ່ານັ້ນມີສິດໄດ້ຮັບຜົນປະໂຫຍດ ບັດແລກອາຫານ ເທົ່າໃດ.

**ການໄດ້ຮັບບັດແລກອາຫານ ຈະມີຜົນຮ້າຍແກ່ຂ້ອຍໃນເວລາທີ່ຂ້ອຍຕ້ອງການໂອນສັນຊາດ ເປັນພົນລະເມືອງ ຫລືບໍ່?**

- ບໍ່. ການໄດ້ຮັບບັດແລກອາຫານຈະບໍ່ເຮັດໃຫ້ຄົນເຂົ້າເມືອງຖືກຖືວ່າເປັນ “ພາລະແກ່ລັດຖະບານ” - ໝາຍຄວາມວ່າ ຄົນທີ່ເຂົ້າມາຢູ່ສະຫະລັດຈະບໍ່ຖືກເນລະເທດສົ່ງກັບປະເທດ, ຖືກປະຕິເສດບໍ່ໃຫ້ເຂົ້າປະເທດ, ຫລື ຖືກປະຕິເສດຖານະຢູ່ຖາວອນ ຄື “ບັດຂຽວ” ຍ້ອນວ່າ ລາວໄດ້ຮັບບັດແລກອາຫານ.

**ຂ້ອຍສາມາດສະໝັກຂໍ ຫລື ຮຽນຮູ້ເພີ້ມເຕີມໄດ້ແນວໃດ?**

- ເພື່ອໃຫ້ໄດ້ຮັບບັດແລກອາຫານ, ທ່ານຕ້ອງປະກອບສຳນວນຄຳຮ້ອງ ຢູ່ຫ້ອງການບັດແລກອາ ຫານໃນທ້ອງຖິ່ນຂອງທ່ານ, ຊຶ່ງຕາມທຳມະດາແລ້ວ ຈະຕັ້ງຢູ່ຫ້ອງການສັງຄົມສົງເຄາະ.
- ຖ້າທ່ານຕ້ອງການຂໍ້ມູນເພີ້ມເຕີມ, ກະຣຸນາໂທລະສັບໄປຫາ ຫ້ອງການບັດແລກອາຫານທ້ອງ ຖິ່ນຂອງທ່ານ ຊຶ່ງມີລາຍຊື່ຢູ່ໃນໜ້າສີຟ້າ ຂອງປື້ມໂທລະສັບ ພາຍໃຕ້ຫົວຂໍ້ ພະແນກບໍລິການສັງຄົມ (social services department) ຫລື ພະແນກສັງຄົມ ສົງເຄາະ (welfare department), ຫລື ໂທເລກໂທບໍ່ເສັຍເງິນທົ່ວປະເທດ ຕາມເລກ 1 800 2215689.
- ມີພະນັກງານຮັບສາຍເວົ້າພາສາສະເປນ ຕາມເລກໂທຟຣີທົ່ວປະເທດ.

*ບັດແລກອາຫານ ເຮັດໃຫ້ອາເມລິກາເຂັ້ມແຂງຂຶ້ນ*

*ກະຊວງກະສິກຳ ແຫ່ງສະຫະລັດ (United States Department of Agriculture - USDA) ຍຶດຖືຫລັກການໃຫ້ໂອກາດອັນເທົ່າທຽມກັນໃນການຊ່ວຍເຫລືອແລະການວ່າຈ້າງ.*